# ເພ້ຍຈັກຈັ່ນສີນ້ຳຕານ

## 1. ລັກສະນະທົ່ວໄປ

ເພ້ຍຈັກຈັ່ນ ມີຫຼາຍຊະນິດ ແຕ່ພົບເຫັນຢູ່ບ້ານເຮົາ ເປັນສັດຕູຂອງເຂົ້າ ມີ 4 ຊະນິດຄື :ເພ້ຍຈັກຈັ່ນສີຂຽວ,ເພ້ຍຈັກຈັ່ນສີນ້ຳຕານ, ເພ້ຍຈັກຈັ່ນສີລາຍແຊກ ແລະ ເພ້ຍຈັກຈັ່ນຫຼັງຂາວແຕ່ທີ່ສຳຄັນມີ 2 ຊະນິດຄື : ເພ້ຍຈັກຈັ່ນສີຂຽວ ແລະ ເພ້ຍຈັກຈັ່ນສີນ້ຳຕານ ເພາະສອງຊະນິດນີ້ເປັນຕົວນຳເຊື້ອພະຍາດ ໄວຣັສ ມາສູ່ຕົ້ນເຂົ້າ. ເພ້ຍຈັກຈັ່ນເປັນແມງໄມ້ຂະໜາດນ້ອຍ ແລະ ເຕັ້ນເກັ່ງ, ການຈະເລີນເຕີບໂຕອາໃສການລອກຄາບຈາກໂຕອ່ອນເປັນໂຕແກ່ .



ຮູບ : ເພ້ຍຈັກຈັ່ນສີນ້ຳຕານ

## 2. ໄລຍະລະບາດ

ເພ້ຍຈັກຈັ່ນພວກນີ້ ຈະທຳລາຍເຂົ້າແຕ່ໄລຍະກ້າ ຈົນຮອດເຂົ້າສຸກ ຖ້າປີໃດມີຄວາມແຫ້ງແລ້ງ ອາກາດຮ້ອນອົບເອົ້າຕິດຕໍ່ກັນຫຼາຍອາທິດ ຖ້າສະພາບເຊັ່ນນີ້ ເໝາະສົມແກ່ການແຜ່ລະບາດຂອງເພ້ຍຈັກຈັ່ນ .

## 3. ລັກສະນະການທຳລາຍ

ເພ້ຍຈັກຈັ່ນທັງໂຕແກ່ ແລະ ໂຕອ່ອນ ດູດກິນນ້ຳລ້ຽງຈາກກາບໃບ ແລະ ລຳຕົ້ນ ຂອງເຂົ້າ ໂດຍສະເພາະ ແມ່ນ ເພ້ຍຈັກຈັ່ນສີຂຽວ ແລະ ສີນ້ຳຕານ.

ຢູ່ປະເທດລາວ ໃນໄລຍະຜ່ານມາ ເພ້ຍຈັກຈັ່ນທີ່ທຳລາຍໜັກ ແລະ ເຮັດໃຫ້ຜົນຜະລິດເສຍຫາຍຫຼາຍ ແມ່ນເພ້ຍຈັກຈັ່ນສີນ້ຳຕານ ດັ່ງນັ້ນ, ໃນເອກະສານເຫຼັ້ມນີ້ຈະເວົ້າເຖິງ ເພ້ຍຈັກຈັ່ນສີນ້ຳຕານ.

## 4. ລັກສະນະຮູບຮ່າງ ແລະ ວົງຈອນຊີວິດຂອງ ເພ້ຍຈັກຈັ່ນສີນ້ຳຕານ

ໂຕແກ່ຈະມີສີນ້ຳຕານອ່ອນ ແລະ ແກ່ປົນກັນລວງຍາວຂອງລຳໂຕແທກໄດ້ 3 — 4 ມິນລິແມັດ. ໂຕຜູ້ມີລຳໂຕນ້ອຍກວ່າໂຕແມ່, ໂຕແກ່ມີຊີວິດຢູ່ໄດ້ 10 — 20 ມື້ ໃນລະດູຝົນ, 30 — 40 ມື້ໃນລະດູແລ້ງ,ເພ້ຍຈັກຈັ່ນສີນ້ຳຕານແມ່ນຶ່ງສາມາດວາງໄຂ່ໄດ້ 300 — 350 ໜ່ວຍ, ໄຂ່ມີລັກສະນະຄ້າຍຄືກັບຫວີໝາກກ້ວຍວາງເປັນຈຸດໆ ຢູ່ທາງໃນກາບໃບ ແລະ ເສັ້ນກາງຂອງໃບເຂົ້າ,ໄຂ່ຈະເບາະພາຍໃນ 5 — 7ມື້. ໂຕແກ່ມີປີກຫຼືບໍ່ມີກໍ່ສາມາດທຳລາຍຕົ້ນເຂົ້າໄດ້ຄືກັນສ່ວນໃຫຍ່ແລ້ວໂຕແກ່ມີປີກຈະເຮັດໃຫ້ຕົ້ນເຂົ້າໄໝ້ ຫຼື ແຫ້ວຕາຍ ໂຕອ່ອນຂອງເພ້ຍຈັກຈັ່ນສີນ້ຳຕານ ໄລຍະການຈະເລີນເຕີບໂຕຂອງໂຕອ່ອນປະມານ 13 — 15 ມື້, ເພ້ຍຈັກຈັ່ນສີນ້ຳຕານຈະຂະຫຍາຍໂຕຢ່າງວ່ອງໄວທີ່ສຸດຕາມແນວພັນເຂົ້າທີ່ມັນມັກ ( ຫຼື ຕາມແນວພັນເຂົ້າ ທີ່ບໍ່ມີຄວາມຕ້ານທານ )



ຮູບ : ການວາງໄຂ່ໃສ່ກາບໃບເຂົ້າ

## 5. ການປ້ອງກັນ ແລະ ການກຳຈັດ

- ໃຊ້ແນວພັນເຂົ້າທີ່ມີຄວາມທົນທານ ແລະ ຕ້ານທານມາປູກ.
- ໃຊ້ວິທີທາງເຂດຕະກຳ (ເຊັ່ນ : ປູກພືດໝູນວຽນ ຫຼືກຳຈັດຫຍ້າຂ້າຫຸ່ມທີ່ມີຢູ່ໃນໄຮ່ນາ ຕາມຄັນນາໃຫ້ກ້ຽງ ແລະ ແປນດີ ).
- ໃຊ້ແມງໄມ້ທີ່ເປັນປະໂຫຍດທຳລາຍ.
- ໃຊ້ການສຳຫຼວດເພື່ອເກັບກຳ ສະພາບພະຍາດບົ້ງແມງຫຼືການເຄື່ອນໄຫວຂອງເພ້ຍຈັກຈັ່ນສີນ້ຳຕານຢູ່ຕາມທົ່ງນາ.
- ການປ້ອງກັນ ແລະການກຳຈັດດ້ວຍສານເຄມີເຊັ່ນ :

ກ. ຢາອາໂຊດຣິນ 65 % ຊະນິດນ້ຳ ສີດໃນອັດຕາ 3— 4 ບ່ວງແກງ ປະສົມກັບນ້ຳ 15 — 20 ລິດ. ຫຼື ຢາເຊວິນ 85 % ຊະນິດຝຸ່ນສີດໃນອັດຕາ 3 — 4 ບ່ວງແກງ ປະສົມກັບນ້ຳ 20 ລິດ ຫຼື ໃຊ້ຢາໄມແຄັບ 50 % ຊະນິດຝຸ່ນສີດໃນອັດຕາ 4 ບ່ວງ ແກງ ປະສົມກັບນ້ຳ 20 ລິດ.

ຂ. ຖ້າການລະບາດຢູ່ໃນນາເຂົ້າເປັນນ້ຳນົມ ໃຫ້ສີດແຕ່ຢາ ເຊວິນ 85% ສ່ວນຢາ ອາໂຊດຣິນ ຫ້າມສີດເພາະຈະເປັນ ອັນຕະລາຍ

- ຖ້າເພ້ຍຈັກຈັ່ນລະບາດໃນໄລຍະເຂົ້າສຸກ ຫ້າມໃຊ້ຢາເຄ ມີທຸກຊະນິດສີດເດັດຂາດ ຄວນເກັບກ່ຽວເອົາໂລດ.

Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.

ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ

# ການປ້ອງກັນ ແລະ ກຳຈັດແມງໄມ້ສັດຕູພືດຕົ້ນຕໍຂອງເຂົ້າ ( ເພ້ຍຈັກຈັ່ນສີນ້ຳຕານ )



ຈັດຕັ້ງປະຕິບັດໂດຍ *CETDU*

(ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ)

ຮ່ວມກັບ:

ໂຄງການ ສົ່ງເສີມ ກະສິກຳ (*LEAP*)